ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ເລກທີ: 11 /ສພບ

ນະຄອນຫຼວງວຽງຈັນ, ວັນທີ: 26/04/2019

ບົດບັນທຶກ
ກອງປະຊຸມສາມັນຜູ້ຖືຮຸ້ນ ທຄຕລ ປະຈຳປີ 2018.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ໄດ້ຈັດກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2018 (ຕໍ່ໄປນີ້ຮຽກວ່າ: "ກອງປະຊຸມ") ຂຶ້ນໃນເວລາ 14:30 ໂມງ ຂອງວັນທີ 26 ເມສາ 2019 ທີ່ຫ້ອງປະຊຸມ Grand Ballroom ໂຮງແຮມແລນມາກແມ່ຂອງຣີເວີໄຊ, ນະຄອນຫຼວງວຽງຈັນ, ໂດຍການເປັນປະທານຂອງ ທ່ານ ປອ. ບຸນເຫຼືອ ສິນໄຊວໍຣະວົງ, ປະທານສະພາບໍລິຫານ ທຄຕລ ພ້ອມດ້ວຍສະມາຊິກສະພາບໍລິຫານ ທຄຕລ, ມີຜູ້ຖືຮຸ້ນເຂົ້າຮ່ວມດ້ວຍຕົນເອງຈຳນວນ 87 ທ່ານ, ຜູ້ມອບສິດຈຳນວນ 193 ທ່ານ ຊຶ່ງລວມຈຳນວນຮຸ້ນທັງໝົດທີ່ເຂົ້າຮ່ວມກອງປະຊຸມເທົ່າກັບ 179.490.932 ຮຸ້ນ, ນັບທັງ 1.060.332 ຮຸ້ນ ທີ່ຖືກມອບສິດ, ບັນລຸອັດຕາສ່ວນ 86,409% ຂອງຈຳນວນຮຸ້ນ ທຄຕລ ທັງໝົດ ແລະ ຖືວ່າຄົບອົງປະຊຸມ ເພື່ອໃຫ້ສາມາດດຳເນີນກອງປະຊຸມໄດ້ຕາມກົດລະບຽບຂອງ ທຄຕລ ແລະ ກົດໝາຍທີ່ກ່ຽວຂ້ອງ. ສຳລັບຮຸ້ນທີ່ບໍ່ໄດ້ເຂົ້າຮ່ວມກອງປະຊຸມ ມີຈຳນວນ 28.232.368 ຮຸ້ນ ເທົ່າກັບ 13,591% ຂອງຈຳນວນຮຸ້ນ ທຄຕລ ທັງໝົດ.

ກ່ອນດຳເນີນແຕ່ລະວາລະ, ປະທານກອງປະຊຸມ ໄດ້ແຈ້ງໃຫ້ທີ່ປະຊຸມຊາບ ກ່ຽວກັບ ບັນດາສະມາຊິກສະພາບໍລິຫານທີ່ເຂົ້າຮ່ວມກອງປະຊຸມ, ລະບຽບການດຳເນີນກອງປະຊຸມ ແລະ ວິທີລົງຄະແນນສຽງ.

ຈາກນັ້ນ, ກອງປະຊຸມ ໄດ້ພິຈາລະນາ, ມີຄຳເຫັນ ແລະ ມີການຕົກລົງໃນແຕ່ລະວາລະ ດັ່ງນີ້:

ວາລະທີ 1: ລາຍງານການຈັດຕັ້ງປະຕິບັດມະຕິຂອງກອງປະຊຸມຜູ້ຖືຮຸ້ນຄັ້ງຜ່ານມາ.

ທ່ານ ພູຂົງ ຈັນທະຈັກ, ຜູ້ອຳນວຍການໃຫຍ່ ທຄຕລ ໄດ້ລາຍງານໃຫ້ກອງປະຊຸມຮັບຊາບ ກ່ຽວກັບ ຄວາມຄືບໜ້າຂອງການຈັດຕັ້ງປະຕິບັດມະຕິຂອງກອງປະຊຸມຜູ້ຖືຮຸ້ນຄັ້ງວັນທີ 27/04/2018.

ຈາກນັ້ນ ປະທານກອງປະຊຸມ ຈຶ່ງໄດ້ສະເໜີໃຫ້ຜູ້ຖືຮຸ້ນມີຄຳຖາມຕໍ່ວາລະນີ້, ແຕ່ບໍ່ມີຄຳຖາມໃດໆ.

ວາລະນີ້ ບໍ່ມີການລົງຄະແນນສຽງ.

ວາລະທີ 2: ລາຍງານຫຍໍ້ການເຄື່ອນໄຫວດຳເນີນງານຂອງ ທຄຕລ ປະຈຳປີ 2018.

ທ່ານ ພູຂົງ ຈັນທະຈັກ, ຜູ້ອຳນວຍການໃຫຍ່ ທຄຕລ ໄດ້ລາຍງານໃຫ້ກອງປະຊຸມຮັບຊາບ ກ່ຽວກັບ ການເຄື່ອນໄຫວດຳເນີນງານຂອງ ທຄຕລ ປະຈຳປີ 2018.

ຈາກນັ້ນ ປະທານກອງປະຊຸມ ຈຶ່ງໄດ້ສະເໜີໃຫ້ຜູ້ຖືຮຸ້ນມີຄຳຖາມຕໍ່ວາລະນີ້, ແຕ່ບໍ່ມີຄຳຖາມໃດໆ.

ວາລະນີ້ ບໍ່ມີການລົງຄະແນນສຽງ.

ວາລະທີ 3: ພິຈາລະນາຮັບຮອງຜົນການດຳເນີນທຸລະກິດປະຈຳປີ 2018:

ທ່ານ ພູຂົງ ຈັນທະຈັກ, ຜູ້ອຳນວຍການໃຫຍ່ ທຄຕລ ໄດ້ແຈ້ງຜົນການດຳເນີນທຸລະກິດປະຈຳປີ 2018 ຕາມມາດຖານສາກົນສະເພາະກິດຈະການ ທີ່ໄດ້ຮັບການກວດສອບຈາກ ບໍລິສັດເອິນແອນຢັງລາວຈຳກັດ ດັ່ງນີ້:

- ຍອດຊັບສິນ/ໜີ້ສິນ: 38.942.645 ລ້ານກີບ;
- ຍອດສິນເຊື່ອທັງໝົດ: 24.338.369 ລ້ານກີບ;
- ຍອດເງິນຝາກທັງໝົດ: 32.968.912 ລ້ານກີບ;
- ກຳໄລກ່ອນອາກອນ: 459.256 ລ້ານກີບ;
- ກຳໄລຫຼັງອາກອນ: 353.656 ລ້ານກີບ,
- ສະເໜີກອງປະຊຸມມອບສິດໃຫ້ສະພາບໍລິຫານ ທຄຕລ ພິຈາລະນາຮັບຮອງຜົນການດຳເນີນທຸລະກິດປະຈຳປີ 2018 ຕາມມາດຖານສາກົນແບບສັງລວມກິດຈະການ ຫຼັງສຳເລັດການກວດສອບ.

ລຳດັບຕໍ່ມາປະທານກອງປະຊຸມ ໄດ້ສະເໜີໃຫ້ຜູ້ຖືຮຸ້ນມີຄຳຖາມຕໍ່ວາລະນີ້, ເຊິ່ງມີຄຳຖາມ ແລະ ການຊີ້ແຈງ ດັ່ງນີ້:

1) **ທ່ານ ໄກອັນ ກາດວານິດ** ໄດ້ມີຄຳເຫັນວ່າ: ກອງປະຊຸມຜູ້ຖືຮຸ້ນຂອງ ທຄຕລ ໃນ 2-3 ປີຜ່ານມານີ້ ບໍ່ມີການຮັບຮອງບົດບັນທຶກກອງປະຊຸມ, ຄວນສະເໜີຮັບຮອງບົດບັນທຶກກອງປະຊຸມຄັ້ງຜ່ານມາ ເພື່ອໃຫ້ຜູ້ຖືຮຸ້ນສາມາດກວດສອບບົດບັນທຶກກອງປະຊຸມວ່າຖືກຕ້ອງບໍ່. ທຄຕລ ບໍ່ມີການແນບບົດບັນທຶກມາກັບເອກະສານກອງປະຊຸມ ແລະ ບໍ່ຮູ້ບ່ອນທີ່ຈະໂຫຼດເອົາ ຕ້ອງໄດ້ສອບຖາມເອົາ, ໃນເວບໄຊທີ່ສາມາດໂຫຼດໄດ້ເຫັນມີແຕ່ບົດບັນທຶກກອງປະຊຸມສະພາບໍລິຫານ.
   - **ທ່ານ ພູຂົງ ຈັນທະຈັກ** ໄດ້ຊີ້ແຈງວ່າ: ທຄຕລ ມີພາກສ່ວນທີ່ຮັບຜິດຊອບເກັບຮັກສາບົດບັນທຶກກອງປະຊຸມ. ນອກຈາກນີ້, ບົດບັນທຶກກອງປະຊຸມ ກໍ່ໄດ້ເປີດເຜີຍລົງໃນລະບົບເປີດເຜີຍຂໍ້ມູນຂອງຕະຫຼາດຫຼັກຊັບລາວ ຊຶ່ງຜູ້ຖືຮຸ້ນທີ່ຕ້ອງການກວດສອບເນື້ອໃນບົດບັນທຶກກອງປະຊຸມ ສາມາດກວດເບິ່ງໄດ້ໃນເວບໄຊ ຫຼື ສາມາດປະສານຫາກອງເລຂາ ໄດ້ຕື່ມ.
2) **ທ່ານ ສຸລິຍະກອນ ອິນທະວົງ**: ມີຄຳຖາມກ່ຽວກັບບົດລາຍງານການເງິນປີ 2018, ບົດລາຍງານການເງິນ ໄຕມາດ 4/2018 ເປີດເຜີຍຊ້າ ຍ້ອນເຫດຜົນໃດ? ແລະ ໃນປີ 2019 ຈະມີວິທີການໃດ ເພື່ອໃຫ້ການເປີດເຜີຍຖານະການເງິນໄວຂຶ້ນ?
   - **ທ່ານ ພູຂົງ ຈັນທະຈັກ** ໄດ້ຊີ້ແຈງວ່າ: ການເປີດເຜີຍຂໍ້ມູນ ທຄຕລ ປະຕິບັດຕາມລະບຽບການທີ່ກຳນົດ, ໄຕມາດ 4/2018 ແມ່ນໄດ້ມີການກວດສອບ ແລະ ຮັບຮອງຈາກສະພາບໍລິຫານ ຢ່າງຖືກຕ້ອງຖີ່ຖ້ວນຈຶ່ງສາມາດເປີດເຜີຍ, ມີຄວາມຊັກຊ້າແຕ່ຍັງນອນຢູ່ໃນຂອບເຂດຕາມລະບຽບການ.

ຈາກນັ້ນ, ປະທານກອງປະຊຸມ ໄດ້ສະເໜີໃຫ້ຜູ້ຖືຮຸ້ນ ລົງຄະແນນສຽງຕໍ່ວາລະນີ້.

ກອງປະຊຸມ ໄດ້ມີມະຕິດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- **ເຫັນດີຈຳນວນ: 179.490.932 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.**
- **ບໍ່ເຫັນດີຈຳນວນ: ...0... ສຽງ, ເທົ່າກັບ ..0... % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.**

ວາລະທີ 4: ພິຈາລະນາຮັບຮອງເງິນປັນຜົນປະຈຳປີ 2018:

ທ່ານ ພູຂົງ ຈັນທະຈັກ, ຜູ້ອຳນວຍການໃຫຍ່ ທຄຕລ ໄດ້ສະເໜີຕໍ່ກອງປະຊຸມວ່າ ຫຼັງຈາກຫັກລາຍຈ່າຍອາກອນ ແລະ ສ້າງຄັງຕ່າງໆຕາມລະບຽບການແລ້ວ, ເຫັນດີຈ່າຍເງິນປັນຜົນຈຳນວນທັງໝົດ: **205.853 ລ້ານກີບ**ໃຫ້ຜູ້ຖືຮຸ້ນ ທຄຕລ ທີ່ມີລາຍຊື່ໃນປຶ້ມບັນຊີຜູ້ຖືຮຸ້ນ ໃນມື້ປິດປຶ້ມບັນຊີຜູ້ຖືຮຸ້ນ ເພື່ອກຳນົດສິດຜູ້ຖືຮຸ້ນໃນການຮັບເງິນປັນຜົນ ແລະ ເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນ ໃນວັນທີ 01 ເມສາ 2019, ໃນອັດຕາ **991 ກີບ/ຮຸ້ນ.** ການຈ່າຍເງິນປັນຜົນໃຫ້ສຳເລັດ ພາຍໃນ 10 ວັນລັດຖະການຫຼັງຈາກກອງປະຊຸມຄັ້ງນີ້.

ລຳດັບຕໍ່ມາປະທານກອງປະຊຸມ ໄດ້ສະເໜີໃຫ້ຜູ້ຖືຮຸ້ນມີຄຳຖາມຕໍ່ວາລະນີ້, ແຕ່ບໍ່ມີຄຳຖາມໃດໆ.

ຈາກນັ້ນ, ປະທານກອງປະຊຸມ ໄດ້ສະເໜີໃຫ້ຜູ້ຖືຮຸ້ນ ລົງຄະແນນສຽງຕໍ່ວາລະນີ້.

ກອງປະຊຸມ ໄດ້ມີມະຕິດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- **ເຫັນດີຈຳນວນ: 179.490.932 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.**
- **ບໍ່ເຫັນດີຈຳນວນ: ...0... ສຽງ, ເທົ່າກັບ ..0... % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.**

ວາລະທີ 5: ພິຈາລະນາຮັບຮອງແຜນການປີ 2019:

ທ່ານ ພູຂົງ ຈັນທະຈັກ, ຜູ້ອຳນວຍການໃຫຍ່ ທຄຕລ ໄດ້ສະເໜີຕໍ່ກອງປະຊຸມ ກ່ຽວກັບ ແຜນການປະຈຳປີ 2019 ດັ່ງນີ້:

- ຍອດຊັບສິນ: 42.742.300 ລ້ານກີບ
- ຍອດເງິນຝາກ: 35.730.000 ລ້ານກີບ
- ຍອດເງິນກູ້: 25.830.000 ລ້ານກີບ
- ກຳໄລກ່ອນອາກອນ: 565.000 ລ້ານກີບ
- ແຜນຮັບພະນັກງານໃໝ່ ປະກອບໃຫ້ ທຄຕລ ທົ່ວລະບົບ ຈຳນວນ 200 ຄົນ,
- ແຜນການຂະຫຍາຍຕາໜ່າງບໍລິການເພີ່ມຂຶ້ນ 10 ໜ່ວຍບໍລິການ ໃນທົ່ວປະເທດ
- ແຜນການນຳໃຊ້ທຶນເພື່ອປະກອບອັດຖຸເຕັກນິກ, ກໍ່ສ້າງ ແລະ ສ້ອມແປງ ທີ່ຄາດວ່າຈະໂອນເປັນຊັບສິນບັດຄົງທີ່ ເປັນຈຳນວນເງິນທັງໝົດ: 172.153 ລ້ານກີບ.

ລຳດັບຕໍ່ມາປະທານກອງປະຊຸມ ໄດ້ສະເໜີໃຫ້ຜູ້ຖືຮຸ້ນມີຄຳຖາມຕໍ່ວາລະນີ້, ເຊິ່ງມີຄຳຖາມ ແລະ ການຊີ້ແຈງ ດັ່ງນີ້:

1) **ທ່ານ ໄກອັນ ກາດອານິດ**: ເອກະສານປະກອບວາລະທີ 5 ມີເນື້ອໃນເວົ້າເຖິງການພັດທະນາບຸກຄະລາກອນ ແລະ CG ຢາກຮູ້ວ່າເປັນການເລີ່ມເຮັດປີທຳອິດ ຫຼື ເຮັດມາກ່ອນແລ້ວ?
   - ແຜນການດຳເນີນງານ 2019 ມີຜະລິດຕະພັນ ໃໝ່ກ່ຽວກັບບັດ Mastercard, ຜ່ານມາ ທຄຕລ ກໍ່ມີຜະລິດຕະພັນບັດຫຼາຍອັນເຊັ່ນ: JCB, Co-Brand ຄວນມີການໂຄສະນາ ແລະ ອັບເດດເວບໄຊ ໃນການໂຄສະນາຕື່ມ ເພາະລູກຄ້າທີ່ຕ້ອງການເຂົ້າຫາທະນາຄານຈະເບິ່ງຂໍ້ມູນຈາກເວບໄຊ.
   - ກ່ຽວກັບຜະລິດຕະພັນພື້ນຖານທີ່ປະຊາຊົນໃຊ້ຫຼາຍຄື ATM ທຳມະດາ, ທະນາຄານມີແຜນທີ່ຈະປ່ຽນເປັນບັດ Chip ເພື່ອໃຫ້ນຳໃຊ້ໄດ້ຢ່າງສາກົນໃນເວລາໃດ?

- ທຄຕລ ມີການພັດທະນາຢ່າງຕໍ່ເນື່ອງ ແຕ່ອາດຈະເນັ້ນໜັກໃນປີ 2019 ໃນການພັດທະນາບຸກຄະລາກອນ ແລະ CG. ຖ້າມີການປ່ຽນແປງໃດທີ່ຈະເປັນຜົນກະທົບຕໍ່ລູກຄ້າຕ້ອງມີການແຈ້ງໃຫ້ລູກຄ້າຊາບລ່ວງໜ້າໃນໄລຍະເວລາທີ່ພຽງພໍໃຫ້ຄົບທຸກຜະລິດຕະພັນ ຊຶ່ງເປັນເລື່ອງພື້ນຖານທີ່ຕ້ອງປະຕິບັດໃຫ້ໄດ້. ແຕ່ເຫັນວ່າຍັງມີບາງອັນທີ່ເຮັດບໍ່ທັນໄດ້ເຊັ່ນ: ການປັບປຸງປຶ້ມເງິນຝາກທີ່ພິມຂ້າມລາຍການ ຄວນພິມທັງໝົດ ເພາະຖ້າມີຫຼາຍລາຍການກໍ່ໝາຍເຖິງລູກຄ້າມີທຸລະກຳກັບທະນາຄານຫຼາຍ.
- ບັດເກົ່າທີ່ໄປປ່ຽນບັດໃໝ່ ທະນາຄານບໍ່ຄວນເກັບບັດຂອງລູກຄ້າໄວ້ ເພາະອາດຈະເປັນການເຮັດໃຫ້ລູກຄ້າລະແວງເຖິງຄວາມປອດໄພ.
  - **ທ່ານ ພູຂົງ ຈັນທະຈັກ** ໄດ້ສະແດງຄວາມຂອບໃຈຕໍ່ກັບການສົ່ງຂ່າວດ້ານບໍລິການ ແລະ ໄດ້ຊີ້ແຈງວ່າ: ກ່ຽວກັບ ການພັດທະນາ, ແຜນຍຸດທະສາດແມ່ນໄດ້ຂຶ້ນແຜນແຕ່ລະວຽກງານ ແລະ ກະກຽມທຶນໃນການພັດທະນາແຕ່ລະດ້ານ. ການພັດທະນາບຸກຄະລາກອນ ກໍ່ມີການຈັດສຳມະນາທັງພາຍໃນ ແລະ ຕ່າງປະເທດ, ລວມທັງການພັດທະນາ CG ແລະ ອື່ນໆ ເຊິ່ງໄລຍະນີ້ກໍ່ຍັງມີໂຄງການບາເຊ2 ເພື່ອໃຫ້ ທຄຕລ ມີຄວາມເຂັ້ມແຂງ ຕາມນະໂຍບາຍທີ່ທະນາຄານແຫ່ງ ສປປ ລາວ ວາງອອກ. ການພັດທະນາດັ່ງກ່າວ ທຄຕລ ໄດ້ດຳເນີນມາໃນແຕ່ລະປີຢ່າງຕໍ່ເນື່ອງ.
  - ດ້ານທຸລະກິດ ມີແຜນທຸລະກິດ, ແຜນລາຍຮັບລາຍຈ່າຍໃນການດຳເນີນງານແຕ່ລະດ້ານ. ສຳລັບການໂຄສະນາຫຼັງມີຜະລິດຕະພັນໃໝ່ ທຄຕລ ກໍ່ໄດ້ເອົາໃຈໃສ່ໃນການລົງໂຄສະນາຜ່ານສື່ຕ່າງໆ ແລະ ຜ່ານເວບໄຊ ຖ້າຍັງບໍ່ມີການອັບເດດກໍ່ຈະປັບປຸງຕື່ມ.
  - ການພັດທະນາບັດ ATM ເປັນແບບ Chip ແມ່ນກຳລັງດຳເນີນການຢູ່ ແຕ່ຍັງບໍ່ທັນສຳເລັດ ຊຶ່ງຈະສືບຕໍ່ໃຫ້ສຳເລັດ.

2) **ທ່ານ ແກ້ວຕາດຳ ມະໂນລົມ**: ປີຜ່ານມາ ທຄຕລ ເປີດໜ່ວຍບໍລິການ ຮັບພະນັກງານ 90 ຄົນ, ປີ 2019 ຈະເປີດໜ່ວຍບໍລິການເພີ່ມ 10 ໜ່ວຍ ແລະ ຮັບພະນັກງານ 200 ກວ່າ ຄົນ, ມີຄວາມຈຳເປັນແນວໃດບໍ່ ເພາະອາດເພີ່ມລາຍຈ່າຍບໍລິຫານ?
   - **ທ່ານ ພູຂົງ ຈັນທະຈັກ** ໄດ້ຊີ້ແຈງວ່າ: ການຂະຫຍາຍຕາໜ່າງບໍລິການມີຄວາມຈຳເປັນ ແລະ ສຳຄັນ. ກ່ອນ ທຄຕລ ຈະຂະຫຍາຍຕາໜ່າງບໍລິການ ແມ່ນຈະມີການສຳຫຼວດຄັກແນ່ ເພື່ອເປັນການບໍລິການຕາມຄວາມຮຽກຮ້ອງຕ້ອງການສັງຄົມ ແລະ ດຳເນີນງານຢ່າງມີປະສິດທິຜົນ. ປີ 2018 ທຄຕລ ຂຶ້ນແຜນເປີດ 9 ໜ່ວຍບໍລິການແຕ່ເປີດຕົວຈິງ 8 ໜ່ວຍ, ປີ 2018 ຂຶ້ນແຜນພະນັກງານ 217 ຄົນ, ປີ 2017 ຂຶ້ນແຜນ 90 ຄົນ; ການປະກອບພະນັກງານແຕ່ລະຈຸດ ແມ່ນຕາມໜ້າວຽກຕົວຈິງ ແລະ ນອນໃນແຜນການທີ່ຂຶ້ນໄວ້ ຊຶ່ງໂດຍລວມເຫັນວ່າຈຳນວນລູກຄ້າ ແລະ ປະລິມານທຸລະກຳຢູ່ແຕ່ລະໜ່ວຍບໍລິການ ກໍ່ເພີ່ມຂຶ້ນ ຈຶ່ງຈຳເປັນຕ້ອງປະກອບພະນັກງານຢ່າງເໝາະສົມພຽງພໍ. ນອກຈາກນີ້ ທຄຕລ ກໍ່ຍັງໄດ້ມີແຜນໃນການພັດທະນາຜະລິດຕະພັນ ແລະ ລະບົບໄອທີ ເພື່ອຮອງຮັບການບໍລິການຂອງລູກຄ້າຕື່ມອີກ ຊຶ່ງເຫັນວ່າຕົວເລກທີ່ຂຶ້ນແຜນມານີ້ມີຄວາມເໝາະສົມແລ້ວ.

ຈາກນັ້ນ, ປະທານກອງປະຊຸມ ໄດ້ສະເໜີໃຫ້ຜູ້ຖືຮຸ້ນ ລົງຄະແນນສຽງຕໍ່ວາລະນີ້.

ກອງປະຊຸມ ໄດ້ມີມະຕິດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- **ເຫັນດີຈຳນວນ: 179.490.932 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.**
- **ບໍ່ເຫັນດີຈຳນວນ: ...0... ສຽງ, ເທົ່າກັບ ..0... % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.**

ວາລະທີ 6: ພິຈາລະນາຮັບຮອງການແຕ່ງຕັ້ງຜູ້ກວດສອບອິດສະຫຼະ ປະຈຳປີ 2019.

ທ່ານ ພູຂົງ ຈັນທະຈັກ, ຜູ້ອຳນວຍການໃຫຍ່ ທຄຕລ ໄດ້ສະເໜີຕໍ່ກອງປະຊຸມ ເພື່ອພິຈາລະນາຮັບຮອງເອົາ ບໍລິສັດເອັນແອນຢັງລາວ ຈຳກັດ ເປັນຜູ້ກວດສອບຖານະການເງິນ ທຄຕລ ປະຈຳປີ 2019, ລາຄາກວດສອບ 93.000 ໂດລາ (ເກົ້າສິບສາມພັນໂດລາສະຫະລັດຖ້ວນ) ພາຍໃຕ້ເງື່ອນໄຂທີ່ບໍລິສັດເອັນແອນຢັງລາວ ຈຳກັດ ຕ້ອງ ປ່ຽນຜູ້ຮຸ້ນສ່ວນຮັບຜິດຊອບ (Partner) ໃນການລົງລາຍເຊັນໃນບົດລາຍງານການເງິນ ແລະ ຜູ້ຮຸ້ນສ່ວນຮັບຜິດຊອບ (Partner) ໃໝ່ ຂອງບໍລິສັດເອັນແອນຢັງລາວ ຈຳກັດ ສາມາດດຳເນີນການກວດສອບບັນຊີໃຫ້ ທຄຕລ ໄດ້ສູງສຸດບໍ່ ເກີນ 5 ປີ (ຮອດປີ 2020).

ລຳດັບຕໍ່ມາປະທານກອງປະຊຸມ ໄດ້ສະເໜີໃຫ້ຜູ້ຖືຮຸ້ນມີຄຳຖາມຕໍ່ວາລະນີ້, ເຊິ່ງບໍ່ມີຄຳຖາມໃດໆ.

ຈາກນັ້ນ, ປະທານກອງປະຊຸມ ໄດ້ສະເໜີໃຫ້ຜູ້ຖືຮຸ້ນ ລົງຄະແນນສຽງຕໍ່ວາລະນີ້.

ກອງປະຊຸມ ໄດ້ມີມະຕິດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- **ເຫັນດີຈຳນວນ: 179.490.932 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມ ກອງປະຊຸມ.**
- **ບໍ່ເຫັນດີຈຳນວນ: ...0... ສຽງ, ເທົ່າກັບ ..0... % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງ ປະຊຸມ.**

ວາລະທີ 7: ພິຈາລະນາຮັບຮອງການລົງທຶນຂອງ ທຄຕລ ໃນການຮ່ວມສ້າງຕັ້ງບໍລິສັດ ລາວເນເຊິນນໍ ເພເມັ້ນ ເນັດເວີກ ຈຳກັດ (Lao National Payment Network Co., LTD)

ທ່ານ ພູຂົງ ຈັນທະຈັກ, ຜູ້ອຳນວຍການໃຫຍ່ ທຄຕລ ໄດ້ສະເໜີກອງປະຊຸມ ເພື່ອພິຈາລະນາຮັບຮອງໃຫ້ ທຄຕລ ຮ່ວມລົງທຶນສ້າງຕັ້ງບໍລິສັດ ລາວ ເນເຊິນນໍ ເພເມັ້ນ ເນັດເວີກ ຈຳກັດ ຊຶ່ງເປັນບໍລິສັດທີ່ໃຫ້ບໍລິການດ້ານລະບົບ ຊຳລະສາງແບບທັນສະໄໝໃຫ້ແກ່ບັນດາທະນາຄານພາຍໃນປະເທດ ໂດຍມີບັນດາທະນາຄານທຸລະກິດພາຍໃນປະເທດ ຈຳນວນ 7 ແຫ່ງ ແລະ ບໍລິສັດຈາກຕ່າງປະເທດ 1 ແຫ່ງ ຮ່ວມລົງທຶນສ້າງຕັ້ງ ຊຶ່ງມີທຶນຈົດທະບຽນທັງໝົດ 34.000 ລ້ານກີບ. ໃນນັ້ນ, ທຄຕລ ໄດ້ຮ່ວມລົງທຶນ 20% ຂອງຮຸ້ນທັງໝົດ ເປັນມູນຄ່າ 6.800 ລ້ານກີບ ແລະ ໄດ້ຮັບສິດໃນ ການແຕ່ງຕັ້ງ ຜູ້ອຳນວຍການບໍລິສັດ.

ລຳດັບຕໍ່ມາປະທານກອງປະຊຸມ ໄດ້ສະເໜີໃຫ້ຜູ້ຖືຮຸ້ນມີຄຳຖາມຕໍ່ວາລະນີ້, ເຊິ່ງມີຄຳຖາມ ແລະ ການຊີ້ແຈງ ດັ່ງນີ້:

1) **ທ່ານ ລິນລິ**, ບໍລິສັດຫຼັກຊັບລາວຈີນ: ພາຍຫຼັງສ້າງຕັ້ງບໍລິສັດດັ່ງກ່າວຈະເປັນສູນຊຳລະຂັ້ນ 2 ຂຶ້ນກັບສູນຊຳ ລະສະສາງຂອງ ທຫລ ບໍ? ຜະລິດຕະພັນ OnePay ຂອງ ທຄຕລ ຈະເປັນສ່ວນໜຶ່ງຂອງບໍລິສັດນີ້ ຫຼື ຈະເປັນ ຄູ່ແຂ່ງທາງທຸລະກິດກັນ?
   - **ທ່ານ ພູຂົງ ຈັນທະຈັກ** ໄດ້ໃຫ້ຂໍ້ມູນວ່າ: ບໍລິສັດ ຈະເປັນນິຕິບຸກຄົນທີ່ຮັບຜິດຊອບລະບົບຊຳ ລະສະສາງລະຫວ່າງທະນາຄານພາຍໃນ ທັງລວມການເຊື່ອມໂຍງ ATM, ການຊຳລະສະສາງຜ່ານ ໂທລະສັບມືຖື ແລະ ການເຊື່ອມໂຍງຜ່ານເຄື່ອງຮູດບັດ ຊຶ່ງຈະສາມາດຫຼຸດຜ່ອນຕົ້ນທຶນຂອງບັນດາ ທະນາຄານສະມາຊິກ. ສ່ວນແຜນການເຊື່ອມໂຍງກັບລະບົບຊຳລະອື່ນເພີ່ມເຕີມນັ້ນ ກໍ່ຕ້ອງເບິ່ງການດຳ ງານຕົວຈິງຂອງບໍລິສັດ. ທຄຕລ ກໍ່ມີແຜນການເຊື່ອມໂຍງ ເພື່ອຫຼຸດຜ່ອນຄວາມສ່ຽງ ແລະ ຕົ້ນທຶນ.

ຈາກນັ້ນ, ປະທານກອງປະຊຸມ ໄດ້ສະເໜີໃຫ້ຜູ້ຖືຮຸ້ນ ລົງຄະແນນສຽງຕໍ່ວາລະນີ້.

ກອງປະຊຸມ ໄດ້ມີມະຕິດ້ວຍຄະແນນສຽງຫຼາຍກວ່າສອງສ່ວນສາມຂອງຈຳນວນຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ແລະ ຖືຮຸ້ນລວມກັນຫຼາຍກວ່າ 80% ຂອງຮຸ້ນ ທຄຕລ ທັງໝົດ ດັ່ງນີ້:

- **ເຫັນດີຈຳນວນ: 87 ຄົນ, ເທົ່າກັບ 100% ຂອງຈຳນວນຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ແລະ ຖືຮຸ້ນລວມກັນຈຳນວນ 179.490.932 ຮຸ້ນ, ເທົ່າກັບ 86,409% ຂອງຈຳນວນຮຸ້ນທັງໝົດ.**
- **ບໍ່ເຫັນດີຈຳນວນ: ...0... ຄົນ, ເທົ່າກັບ ...0...% ຂອງຈຳນວນຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ແລະ ຖືຮຸ້ນລວມກັນຈຳນວນ ...0... ຮຸ້ນ, ເທົ່າກັບ ...0...% ຂອງຈຳນວນຮຸ້ນທັງໝົດ.**

ພາຍຫຼັງທີ່ກອງປະຊຸມໄດ້ດຳເນີນຄົບທຸກວາລະທີ່ໄດ້ກຳນົດໄວ້ໃນໜັງສືແຈ້ງເຊີນແລ້ວນັ້ນ, ປະທານກອງປະຊຸມ ໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນມີຄຳຖາມ ຫຼື ຄຳເຫັນຕໍ່ບັນຫາອື່ນໆ, ເຊິ່ງໄດ້ມີຄຳຖາມ ແລະ ການຊີ້ແຈງດັ່ງນີ້:

1) **ທ່ານ ໄກອັນ ກາດວານິດ**: ປົກກະຕິລາຄາຮຸ້ນບໍລິສັດໃຫຍ່ບໍ່ໄດ້ບົ່ງບອກເຖິງການດຳເນີນກິດຈະການ ເວລາຜູ້ຊື້ຫຼາຍກໍ່ຈະຈະເຮັດໃຫ້ລາຄາຮຸ້ນສູງຂຶ້ນ ເວລາມີເງິນລົງທຶນຈາກຕ່າງປະເທດກໍ່ຈະເປັນຜົນດີຕໍ່ຄົນລາວ. ຄົນຕ່າງປະເທດສາມາດມາເປີດບັນຊີຢູ່ລາວໄດ້ ແຕ່ທະນາຄານປະຕິເສດໃນການອອກບັດ ATM ຫຼື ໃຊ້ BCEL One, ເຮັດໃຫ້ລູກຄ້າຄົນຕ່າງປະເທດບໍ່ສາມາດກວດສອບເງິນຂອງຕົນໄດ້ ເພາະບໍ່ໄດ້ມີໃບອະນຸຍາດເຮັດວຽກຢູ່ລາວ, ເຫັນວ່າ ຄວນມີການຄົ້ນຄວ້າບັນຫາດັ່ງກ່າວ, ເປັນຫຍັງ ທຄຕລ ຈຶ່ງປະຕິບັດຄືດັ່ງກ່າວ?
   - ບັດ Credit ທີ່ໝົດອາຍຸ ທຄຕລ ປ່ຽນບັດໃໝ່ໃຫ້ຟຣີ, ແຕ່ບັດ ATM ທຄຕລ ເກັບຄ່າທຳນຽມຄ່າອອກບັດ 50%. ລູກຄ້າທີ່ຈະສາມາດຮັກສາບັດໄດ້ເຖິງ 5 ປີ ກໍ່ເປັນເວລາຍາວສົມຄວນ, ຈະເປັນພາບພົດທີ່ດີ ຖ້າ ທຄຕລ ປ່ຽນບັດໃຫ້ໂດຍບໍ່ເກັບຄ່າທຳນຽມ.
   - ຂໍເສີມເລື່ອງບັດຂອງ ທຄຕລ, ການໂຄສະນາເຖິງລູກຄ້າຜ່ານມາ ທຄຕລ ເຮັດໄດ້ດີຂໍຍອມຮັບ ແຕ່ການໂຄສະນາທາງເວັບໄຊບໍ່ຫຼາຍບໍ່ມີການອັບເດດ, ເຊິ່ງລູກຄ້າຜູ້ທີ່ເຂົ້າມາເບິ່ງເວບໄຊແມ່ນຜູ້ທີ່ຕ້ອງການເຂົ້າມາຫາທະນາຄານ ຈຶ່ງຄວນເອົາໃຈໃສ່ຕື່ມ, ຍັງມີບາງຜະລິດຕະພັນທີ່ຂາດການໂຄສະນາເຊັ່ນ: ບັດ JCB;
     - **ທ່ານ ພູຂົງ ຈັນທະຈັກ** ໄດ້ຊີ້ແຈງວ່າ: ນັກລົງທຶນຕ່າງປະເທດທີ່ມາຊື້ຮຸ້ນ ຈະມີ 2 ກຸ່ມ: 1. ກຸ່ມທີ່ຂໍເປີດບັນຊີເງິນຝາກ ເຊິ່ງ ທຄຕລ ພິຈາລະນາໂດຍອີງໃສ່ລະບຽບ KYC ຂອງ ທຄຕລ. ຫາກລູກຄ້າມີບັນຊີເງິນຝາກປະຢັດ ແມ່ນສາມາດຂໍອອກບັດ ATM ຫຼື ບໍລິການອື່ນໆໄດ້. ສຳລັບແບບທີ່ 2. ແມ່ນການເປີດບັນຊີເງິນຝາກປະຢັດ ເພື່ອຊື້ຮຸ້ນ ແມ່ນປະຕິບັດຕາມລະບຽບຂອງຕະຫລາດຫຼັກຊັບ ແລະ ສຄຄຊ ເຊິ່ງເງື່ອນໄຂ ບັນຊີຮຸ້ນແມ່ນຈະມີຂໍ້ຈຳກັດ ບໍ່ຄືກັບບັນຊີເງິນຝາກປະຢັດທົ່ວໄປ. ສະເໜີໃຫ້ຜູ້ຖືຮຸ້ນ ສອບຖາມຂໍ້ມູນເພີ່ມເຕີມກັບພາກສ່ວນກ່ຽວຂ້ອງ (ບໍລິສັດຫຼັກຊັບ) ຕື່ມ.
     - ບັນຫາການເກັບຄ່າທຳນຽມ ແມ່ນ ທຄຕລ ມີລະບຽບປະຕິບັດເຊັ່ນນັ້ນ ໂດຍລວມກໍ່ເພື່ອເປັນການທົດແທນຕົ້ນທຶນຂອງບັດ. ສ່ວນວ່າ ທຄຕລ ຈະມີນະໂຍບາຍຍົກເວັ້ນແນວໃດນັ້ນ ຕ້ອງໄດ້ມີການພິຈາລະນາຄົ້ນຄວ້າເຖິງຄວາມເໝາະສົມກ່ອນ.
2) **ທ່ານ ແກ້ວຕາດຳ ມະໂນລົມ**: ໄດ້ສະເໜີວ່າການຊື້ຮຸ້ນຄວນມີໃບຢັ້ງຢືນເປັນລາຍລັກອັກສອນໄດ້ບໍ?
   - ແຜນ ທຄຕລ ປີ 2019 ຈະມີກຳໄລກ່ອນອາກອນ 565 ຕື້ກີບ ຖ້າທຽບກັບຕົວເລກປີ 2018 ເຫັນວ່າ ກຳໄລເພີ່ມຂຶ້ນຢູ່ປະມານ 20% ກວ່າ, ປັດໃຈໃດທີ່ຈະເຮັດໃຫ້ບັນລຸແຜນດັ່ງກ່າວ?
     - **ທ່ານ ພູຂົງ ຈັນທະຈັກ:** ໄດ້ມີຄຳເຫັນວ່າ ກ່ຽວກັບ ການຊື້ຮຸ້ນ ແມ່ນມີການບັນທຶກຂໍ້ມູນຢ່າງລະອຽດດ້ວຍລະບົບຂອງຕະຫຼາດຫຼັກຊັບ ຊຶ່ງຖ້າຕ້ອງການຂໍ້ມູນ ກໍ່ສາມາດປະສານເອົາໄດ້.
     - ກ່ຽວກັບແຜນກຳໄລຂອງ ທຄຕລ, ແມ່ນອີງໃສ່ຜົນການດຳເນີນທຸລະກິດໄລຍະຜ່ານມາ ອີງໃສ່ແຜນການຂະຫຍາຍທຸລະກິດ, ແຜນລາຍຮັບຄ່າທຳນຽມ, ຄຸ້ມຄອງສິນເຊື່ອ ແລະ ຄຸ້ມຄອງລາຍຈ່າຍ ໂດຍລວມກໍ່ໄດ້ມີການຄິດໄລ່ ຈຶ່ງໄດ້ຂຶ້ນແຜນດັ່ງກ່າວ ແລະ ທຄຕລ ກໍ່ຈະພະຍາຍາມສູ້ຊົນປະຕິບັດໃຫ້ບັນລຸແຜນການທີ່ຂຶ້ນໄວ້.

3) **ທ່ານ ສຸລິຍະກອນ ອິນທະວົງ:** ບັນຫາ ATM ຂອງ ທຄຕລ ຜ່ານມາມີຄົນນຳໃຊ້ຫຼາຍ ແລະ ທີ່ຈິງ ສາມາດກົດຖອນເງິນສົດຮ່ວມກັນໄດ້ກັບຕູ້ ATM ຂອງທະນາຄານອື່ນອີກ, ແຕ່ຍັງມີຫຼາຍຄົນບໍ່ຮູ້ ລໍຖ້າກົດສະເພາະຕູ້ຂອງ ທຄຕລ.

   - **ທ່ານ ພູຂົງ ຈັນທະຈັກ:** ໄດ້ສະແດງຄວາມຂອບໃຈຕໍ່ຄຳເຫັນ ແລະ ໄດ້ຊີ້ແຈງວ່າ ເມື່ອກ່ອນ ທຄຕລ ມີລະບົບ Bconnex ທີ່ ທຄຕລ ຄຸ້ມຄອງ ແລະ ໄດ້ໂອນເຂົ້າໃນໂຄງການ LAPS ຂອງ ທະນາຄານແຫ່ງ ສປປ ລາວ, ເຊິ່ງກຳລັງຈະກາຍເປັນບໍລິສັດ Lao National Payment Network ທີ່ເປັນບໍລິສັດນິຕິບຸກຄົນ ເຊິ່ງຈະມີການໂຄສະນາໃຫ້ຫຼາຍຂຶ້ນ.

4) **ທ່ານນາງ ພອນຄຳ ພົມສະຫວັນ:** ຢາກຮູ້ວິທີການໃນການຮັບພະນັກງານໃໝ່ຂອງ ທຄຕລ ມີຂັ້ນຕອນການປະຕິບັດແນວໃດ?

   - **ທ່ານ ພູຂົງ ຈັນທະຈັກ** ຕອບວ່າ: ກ່ຽວກັບການຮັບພະນັກງານ ທຄຕລ ມີລະບຽບການພາຍໃນ, ມີລະບຽບຂັ້ນຕອນ, ແຕ່ລະພະແນກ-ສາຂາ ຂຶ້ນແຜນຄວາມຕ້ອງການພະນັກງານ ຜ່ານຄະນະກຳມະການສ້າງແຜນ ເພື່ອທຽບຄວາມຕ້ອງການພະນັກງານກັບແຜນການປະຕິບັດວຽກງານຕົວຈິງ. ໃນການຮັບພະນັກງານແມ່ນມີການປະກາດຮັບຕາມເງື່ອນໄຂຂອງແຕ່ລະຕຳແໜ່ງງານ ເຊິ່ງຜູ້ສະໝັກຕ້ອງຜ່ານການສອບເສັງຂຽນ ແລະ ສຳພາດ ແລ້ວເອົາຄະແນນລວມກັນ ເພື່ອກຳນົດຜູ້ສະໝັກທີ່ຄົບເງື່ອນໄຂ.
   - **ທ່ານ ປອ ບຸນເຫຼືອ ສິນໄຊວໍຣະວົງ** ໄດ້ເສີມຕື່ມວ່າ: ບັນຫາບຸກຄະລາກອນ ສະພາບໍລິຫານໄດ້ເອົາໃຈໃສ່ຕິດຕາມ. ການຮັບພະນັກງານຂອງ ທຄຕລ ມີການປະກາດຮັບສະໝັກ, ສອບເສັງ ແລະ ການສຳພາດ ເພື່ອຄັດເອົາຄົນເກັ່ງມີຄຸນນະພາບ, ຄັດເລືອກຢ່າງໂປ່ງໃສ ແລະ ຄະແນນກໍ່ມີການປະກາດໃຫ້ທຸກຄົນຮູ້.

5) **ທ່ານ ເຄນ ແສງມະນີ:** ໄດ້ສະແດງຄວາມຍິນດີວ່າເງິນປັນຜົນໃນປີ 2018 ເປັນຈຳນວນທີ່ສູງກວ່າທຸກປີ. ແຕ່ຂໍສະເໜີໃຫ້ ທຄຕລ ຄວນເພີ່ມການເປີດເຜີຍຂໍ້ມູນການເງິນທີ່ມີລັກສະນະວິເຄາະ ເພື່ອເປັນຂໍ້ມູນສຳລັບນັກລົງທຶນ ແລະ ຜູ້ທີ່ສົນໃຈຕື່ມ. ແຜນການປຸກສ້າງອາຄານຫຼັງໃໝ່ຂອງ ທຄຕລ ທີ່ເຄີຍຜ່ານການຮັບຮອງໃນກອງປະຊຸມແລ້ວ, ມີຄວາມຄືບໜ້າແນວໃດ?

   - **ທ່ານ ພູຂົງ ຈັນທະຈັກ:** ໄດ້ມີຄຳເຫັນວ່າເລື່ອງການເປີດເຜີຍຂໍ້ມູນຕ່າງໆໃນເວບໄຊ ແມ່ນມີລະບຽບການຄຸ້ມຄອງ. ຜ່ານມາ ທຄຕລ ກໍ່ໄດ້ເອົາໃຈໃສ່ໃນການເປີດເຜີຍຂໍ້ມູນຕ່າງໆ. ສຳຫຼັບການວິເຄາະຂໍ້ມູນຕ່າງໆ ໂດຍທົ່ວໄປບໍລິສັດຫຼັກຊັບ ກໍເປັນຜູ້ສ້າງບົດລາຍງານວິເຄາະນີ້ ແລະ ສະໜອງຂໍ້ມູນຕໍ່ຜູ້ຖືຮຸ້ນ.
   - ຕໍ່ກັບໂຄງການອາຄານຫຼັງໃໝ່ຂອງ ທຄຕລ ໄດ້ມີການໂຈະໄວ້ກ່ອນ ເນື່ອງຈາກເງື່ອນໄຂດ້ານແຫຼ່ງທຶນຂອງ ທຄຕລ ບໍ່ທັນພຽງພໍ ແລະ ຕ້ອງໄດ້ໃຊ້ທຶນຈຳນວນຫຼາຍ. ການຂະຫຍາຍຈຸດບໍລິການຕ່າງໆຂອງ ທຄຕລ ແມ່ນເນັ້ນໃສ່ການເຊົ່າເປັນສ່ວນໃຫຍ່. ຕໍ່ໜ້າຖ້າກິດຈະການຂະຫຍາຍຕົວດີ, ມີແຫຼ່ງທຶນພຽງພໍ ທຄຕລ ກໍ່ອາດຈະຄົ້ນຄວ້ານຳສະເໜີໂຄງການອາຄານຫຼັງໃໝ່ຜ່ານກອງປະຊຸມຄືນຕື່ມ.

ເມື່ອບໍ່ມີຄຳຖາມອື່ນໃດແລ້ວ, ປະທານກອງປະຊຸມ ໄດ້ກ່າວສະແດງຄວາມຂອບໃຈຜູ້ຖືຮຸ້ນ ແລະ ຕາງໜ້າຜູ້ຖືຮຸ້ນ ທີ່ໄດ້ໃຫ້ກຽດເຂົ້າຮ່ວມກອງປະຊຸມ ພ້ອມທັງໄດ້ປະກາດປິດກອງປະຊຸມໃນເວລາ 16:00 ໂມງຂອງວັນດຽວກັນ.

ປະທານກອງປະຊຸມ

ປອ. ບຸນເຫຼືອ ສິນໄຊວໍຣະວົງ

ຜູ້ບັນທຶກ

ສອນນາລິນ ແສງມະນີ